ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ　　　　　　　　ເລກທີ 2823 /ກວຕ

ນະຄອນຫຼວງວຽງຈັນ, ວັນທີ 17 DEC 2019

# ຂໍ້ຕົກລົງ
# ວ່າດ້ວຍພັນພືດໃໝ່

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມຊັບສິນທາງປັນຍາ ສະບັບເລກທີ 0482/ກວຕ.ກຊປ, ລົງວັນທີ 22 ມີນາ 2019.

**ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານພັນພືດໃໝ່ ເປັນຕົ້ນ ການຈົດທະບຽນພັນພືດໃໝ່, ການດຳເນີນການຫຼັງການຈົດທະບຽນພັນພືດໃໝ່, ການເປັນຜູ້ຕາງໜ້າ, ການທົບທວນຄືນທາງດ້ານບໍລິຫານ ແລະ ອົງການຄຸ້ມຄອງວຽກງານພັນພືດໃໝ່ ເພື່ອຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ກ່ຽວກັບພັນພືດໃໝ່ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 ພັນພືດໃໝ່**

ພັນພືດໃໝ່ ແມ່ນພັນພືດທີ່ຍັງບໍ່ທັນຮູ້ຈັກກັນທົ່ວໄປ ໝາຍເຖິງກຸ່ມຂອງພືດທີ່ມີລັກສະນະທາງພຶກສາຊາດຢ່າງດຽວກັນ ແລະ ຊຶ່ງສາມາດກຳນົດຄຸນລັກສະນະຕ່າງໆ ທີ່ເປັນຜົນມາຈາກປະເພດພັນທຸກຳໃດໜຶ່ງ ຫຼື ຫຼາຍປະເພດພັນທຸກຳຮ່ວມກັນ, ມີຄວາມແຕກຕ່າງຈາກກຸ່ມອື່ນໃນພືດຊະນິດດຽວກັນຢ່າງໜ້ອຍໜຶ່ງຄຸນ

ລັກສະນະ, ມີຄວາມສະໝ່ຳສະເໝີ ແລະ ມີຄວາມຄົງຕົວ ໃນເວລານຳໄປຂະຫຍາຍພັນ ໂດຍບໍ່ຄຳນຶງວ່າ ຈະຄົບຕາມເງື່ອນໄຂ ສຳລັບການໃຫ້ສິດການປົກປ້ອງກຸ່ມຂອງພືດດັ່ງກ່າວ ໃຫ້ແກ່ນັກປະສົມພັນພືດກໍຕາມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຮ້ອງຂໍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນ ຄຳຮ້ອງຂໍຈົດທະບຽນພັນພືດໃໝ່, ຂໍຂັດຄ້ານ, ດັດແກ້, ຍົກເລີກ ຫຼື ລຶບລ້າງ ການຈົດທະບຽນພັນພືດໃໝ່ ຫຼື ຜູ້ສືບທອດສິດຜົນປະໂຫຍດຂອງບຸກຄົນດັ່ງກ່າວ;
2. **ຄຳຮ້ອງ** ໝາຍເຖິງ ສຳນວນເອກະສານການຍື່ນຄຳຮ້ອງຂໍຈົດທະບຽນພັນພືດໃໝ່, ຄັດຄ້ານ, ດັດແກ້, ຍົກເລີກ ຫຼື ລຶບລ້າງການຈົດທະບຽນພັນພືດໃໝ່;
3. **ການຄັດຄ້ານ** ໝາຍເຖິງ ບຸກຄົນທີສາມ ທີ່ຍື່ນຄຳຮ້ອງຂໍຄັດຄ້ານຕໍ່ການຮ້ອງຂໍຈົດທະບຽນພັນພືດໃໝ່ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນພັນພືດໃໝ່ ໃນຮູບແບບໃດກໍຕາມ;
4. **ການຍົກເລີກ** ໝາຍເຖິງ ບຸກຄົນກ່ຽວຂ້ອງ ທີ່ຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນພັນພືດໃໝ່ ໂດຍເຈົ້າຂອງພັນພືດໃໝ່ ຫຼື ບຸກຄົນທີສາມ;
5. **ໃບໂອນສິດ** ໝາຍເຖິງ ເອກະສານ ທີ່ເປັນລາຍລັກອັກສອນປະເພດໜຶ່ງ ທີ່ໄດ້ກຳນົດ ກ່ຽວກັບການໂອນສິດ;
6. **ຜູ້ໄດ້ຮັບອະນຸຍາດນຳໃຊ້** ໝາຍເຖິງ ບຸກຄົນໜຶ່ງ, ຫຼາຍຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດນຳໃຊ້ຈາກເຈົ້າຂອງສິດຕໍ່ກັບພັນພືດໃໝ່;
7. **ຜູ້ອະນຸຍາດນຳໃຊ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ອອກໃບອະນຸຍາດນຳໃຊ້ສິດຕໍ່ກັບພັນພືດໃໝ່;
8. **ໃບມອບສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນ ຊຶ່ງເຈົ້າຂອງສິດໄດ້ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນ;
9. **ຜູ້ມອບສິດ** ໝາຍເຖິງ ຜູ້ທີ່ມອບສິດຂອງຕົນໃຫ້ ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນໃນການຍື່ນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ຫຼື ດຳເນີນການອື່ນຢູ່ ນຳກົມຊັບສິນທາງປັນຍາ;
10. **ຜູ້ຕາງໜ້າ** ໝາຍເຖິງ ທະນາຍຄວາມ ຫຼື ຕົວແທນ ທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງພັນພືດ ໃນການຍື່ນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ຫຼື ດຳເນີນການອື່ນ ຢູ່ນຳກົມຊັບສິນທາງປັນຍາ;
11. **ນັກປະສົມພັນພືດ** ໝາຍເຖິງ ບຸກຄົນທີ່ປະສົມພັນ ຫຼື ຄົ້ນພົບ ແລະ ພັດທະນາພັນພືດ ຫຼື ບຸກຄົນທີ່ເປັນຜູ້ວ່າຈ້າງນັກປະສົມພັນ ຫຼື ບຸກຄົນທີ່ມອບໝາຍວຽກໃຫ້ນັກປະສົມພັນພືດ ຫຼື ບຸກຄົນທີ່ຮ່ວມກັນປະສົມພັນພືດ ທີ່ໄດ້ກຳນົດໄວ້ໃນສັນຍາຕາມກົດໝາຍ ລວມທັງຜູ້ສືບທອດສິດ ຂອງບຸກຄົນທີ່ກ່າວມາເທິງນີ້
12. **ການປະສົມພັນພືດ ຫຼື ການປັບປຸງພັນພືດ** ໝາຍເຖິງ ການເອົາສ່ວນຂະຫຍາຍພັນຈາກພືດຕົ້ນໜຶ່ງ ຫຼື ຫຼາຍຕົ້ນມາປະສົມກັນ ຫຼື ການຄົ້ນພົບ ແລະ ພັດທະນາພັນພືດທີ່ມີຢູ່ໃນປັດຈຸບັນ ເພື່ອເຮັດໃຫ້ເກີດພັນພືດໃໝ່ຂຶ້ນມາ.

**ມາດຕາ 4 ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງພັນພືດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 75 ຂອງ ກົດໝາຍ ວ່າດ້ວຍ ຊັບສິນ

ທາງປັນຍາ ມີສິດຍື່ນຄຳຮ້ອງຂໍຈົດທະບຽນ ເພື່ອຂໍຮັບການປົກປ້ອງພັນພືດໃໝ່, ໄດ້ຮັບໃບຢັ້ງຢືນການຈົດທະບຽນ, ນຳໃຊ້ສິດຂອງຕົນໃນການດຳເນີນການ ແກ້ໄຂທາງດ້ານບໍລິຫານ ແລະ ດຳເນີນການເຄື່ອນໄຫວອື່ນຕາມທີ່ໄດ້ກຳນົດໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 5 ປະເພດ ແລະ ຊະນິດ ຂອງພັນພືດ**

ພັນພືດທີ່ສາມາດຂໍຈົດທະບຽນເປັນພັນພືດໃໝ່ ຢູ່ ສປປ ລາວ ແມ່ນໄດ້ກຳນົດໄວ້ໃນ ບັນຊີລາຍຊື່ປະເພດ ແລະ ຊະນິດພັນພືດ ຕາມການກຳນົດຂອງກົມ.

## ໝວດທີ 2
## ການຈົດທະບຽນພັນພືດໃໝ່

**ມາດຕາ 6 ເງື່ອນໄຂ ການຈົດທະບຽນພັນພືດໃໝ່**

ພັນພືດທີ່ຈະນຳມາຈົດທະບຽນເປັນພັນພືດໃໝ່ ໃຫ້ມີເງື່ອນໄຂ ດັ່ງນີ້:

1. ຕ້ອງໃໝ່;
2. ຕ້ອງແຕກຕ່າງ;
3. ຕ້ອງສະໝໍ່າສະເໝີ;
4. ຕ້ອງຄົງຕົວ.

ນອກຈາກເງື່ອນໄຂ ທີ່ໄດ້ກຳນົດໄວ້ເທິງນີ້ ການຈົດທະບຽນ ຍັງຕ້ອງໄດ້ພິຈາລະນາການກຳນົດຊື່ຂອງພັນພືດໃໝ່ນັ້ນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 7 ຂັ້ນຕອນການຍື່ນຄຳຮ້ອງຂໍຈົດທະບຽນພັນພືດໃໝ່**

ການຍື່ນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ມີຂັ້ນຕອນ ດັ່ງນີ້:

1. ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ຕ້ອງຍື່ນຄຳຮ້ອງ ຢູ່ນຳກົມຊັບສິນທາງປັນຍາ ແລະ ຕ້ອງປະຕິບັດໃຫ້ໄດ້ຕາມເງື່ອນໄຂຕໍ່າສຸດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 77 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;
2. ກົມຊັບສິນທາງປັນຍາ ຕ້ອງຮັບຄຳຮ້ອງ, ອອກໃບຮັບຄຳຮ້ອງ ຊຶ່ງລະບຸເລກທີ ແລະ ວັນທີຍື່ນຄຳຮ້ອງ ໃນກໍລະນີ ທີ່ຄຳຮ້ອງຫາກສອດຄ່ອງຕາມເງື່ອນໄຂຕໍ່າສຸດ;
3. ກົມຊັບສິນທາງປັນຍາ ຈະບໍ່ຮັບຄຳຮ້ອງດັ່ງກ່າວ ໃນກໍລະນີ ທີ່ຄຳຮ້ອງຫາກບໍ່ສອດຄ່ອງຕາມເງື່ອນໄຂຕໍ່າສຸດ;
4. ໃນກໍລະນີ ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ມີຈຸດປະສົງຂໍຖອນຄຳຮ້ອງ ຫຼື ຄຳຮ້ອງຖືກສະຫຼະສິດ ຫຼື ຖືກປະຕິເສດຈະບໍ່ໄດ້ສົ່ງຄືນຄ່າທຳນຽມ ແລະ ຄ່າບໍລິການທີ່ຈ່າຍໄປແລ້ວ.

ໃນກໍລະນີ ທີ່ຜູ້ຮ້ອງຂໍຈົດທະບຽນ ຫາກຮຽກເອົາວັນບູລິມະສິດ ແມ່ນໃຫ້ປະຕິບັດຕາມ ມາດຕາ 76 ຂອງ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 8 ສຳນວນຄຳຮ້ອງຂໍຈົດທະບຽນພັນພືດໃໝ່**

ສຳນວນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ສາມາດຍື່ນເປັນພາສາລາວ ຫຼື ພາສາອັງກິດກໍໄດ້ ຊຶ່ງປະກອບມີເອກະສານ ດັ່ງນີ້:

1. ຄຳຮ້ອງຂໍສິດຕໍ່ພັນພືດທີ່ໄດ້ມາຈາກການປະສົມພັນ ຕາມແບບພິມ;
2. ຊື່ນັກປະສົມພັນພືດ,ຖ້າຜູ້ຮ້ອງຂໍບໍ່ແມ່ນນັກປະສົມພັນພືດຕ້ອງມີໜັງສືຢັ້ງຢືນຄວາມເປັນເຈົ້າຂອງ;
3. ໃບມອບສິດ ທີ່ບົ່ງບອກຊື່ ແລະ ທີ່ຢູ່ ຂອງຜູ້ຕາງໜ້າ ຢູ່ ສປປ ລາວ ໃນກໍລະນີ ທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ;
4. ໜັງສືສະເໜີການກຳນົດຊື່ໃໝ່;
5. ບົດອະທິບາຍຄຸນລັກສະນະຂອງພັນພືດ ກ່ຽວກັບຄວາມແຕກຕ່າງ, ຄວາມສະໝໍ່າສະເໝີ ແລະ ຄວາມຄົງຕົວ ແລະ ອະທິບາຍ ກ່ຽວກັບການຈັດລຳດັບແນວພັນ ແລະ ຂັ້ນຕອນການເພາະປູກ;
6. ຕົວຢ່າງສ່ວນຂະຫຍາຍພັນພືດ ຫຼື ໜັງສືຢັ້ງຢືນ ກ່ຽວກັບສ່ວນຂະຫຍາຍພັນພືດ;
7. ໃບຢັ້ງຢືນບ່ອນທີ່ສາມາດ ຊອກຫາຂໍ້ມູນທີ່ຈຳເປັນ ໃນການກຳນົດເງື່ອນໄຂຂອງຄວາມແຕກຕ່າງ ຄວາມສະໝໍ່າສະເໝີ ແລະ ຄວາມຄົງຕົວ;
8. ຂໍ້ມູນອື່ນທີ່ກົມຊັບສິນທາງປັນຍາກຳນົດ;
9. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ໃນກໍລະນີຄຳຮ້ອງ ແລະ ເອກະສານທີ່ຍື່ນເປັນພາສາອັງກິດ ຕ້ອງແປເປັນພາສາລາວໂດຍສອດຄ່ອງຕາມມາດຕາ 77 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ຖ້າບໍ່ປະຕິບັດຕາມເງື່ອນໄຂດັ່ງກ່າວ ຄຳຮ້ອງຈະບໍ່ຖືກນຳມາພິຈາລະນາ ແລະ ຖືວ່າຄຳຮ້ອງນັ້ນຖືກສະຫຼະສິດ.

ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ບໍ່ຈຳເປັນຕ້ອງແປເນື້ອໃນບາງສ່ວນຂອງຄຳຮ້ອງເຊັ່ນ: ຊື່ ແລະ ທີ່ຢູ່ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ຄຳສັບທາງດ້ານວິຊາການ.

ໃນກໍລະນີ ຊື່ພັນພືດໃດໜຶ່ງຫາກບໍ່ເປັນພາສາອັງກິດຕ້ອງໄດ້ແປເປັນພາສາລາວ ຫຼື ຕີຄວາມໝາຍ ແລະ ການອ່ານອອກສຽງຂອງຊື່ພັນພືດນັ້ນ.

**ມາດຕາ 9 ເອກະສານ ກ່ຽວກັບຄຸນລັກສະນະພັນພືດໃໝ່**

ບົດອະທິບາຍຄຸນລັກສະນະຂອງພັນພືດຕ້ອງມີຂໍ້ມູນດັ່ງນີ້

1. ກ່ຽວກັບຄວາມແຕກຕ່າງ, ຄວາມສະໝໍ່າສະເໝີ ແລະ ຄວາມຄົງຕົວ;
2. ກ່ຽວກັບການຈັດລຳດັບແນວພັນ ແລະ ຂັ້ນຕອນການເພາະປູກ;
3. ຕົວຢ່າງສ່ວນຂະຫຍາຍພັນພືດ ຫຼື ໜັງສືຢັ້ງຢືນ ກ່ຽວກັບສ່ວນຂະຫຍາຍພັນພືດ;
4. ໃບຢັ້ງຢືນບ່ອນທີ່ສາມາດຊອກຫາຂໍ້ມູນທີ່ຈຳເປັນ ໃນການກຳນົດເງື່ອນໄຂຂອງຄວາມແຕກຕ່າງ, ຄວາມສະໝໍ່າສະເໝີ ແລະ ຄວາມຄົງຕົວ;
5. ຊື່ ແລະ ທີ່ຢູ່ ຂອງໜ່ວຍງານກວດສອບ;
6. ວິທີການກວດສອບພັນພືດໃໝ່

**ມາດຕາ 10 ຫຼັກການ ແລະ ການພິຈາລະນາ ຄຳຮ້ອງຂໍຈົດທະບຽນພັນພືດໃໝ່**

ເພື່ອໃຫ້ໄດ້ຮັບການຈົດທະບຽນພັນພືດໃໝ່ ຜູ້ຮ້ອງຂໍຈົດທະບຽນ, ຕ້ອງປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ໃນກໍລະນີທີ່ມີການຍື່ນຫຼາຍຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ຊະນິດດຽວກັນແມ່ນໃຫ້ພິຈາລະນາຕາມ ຫຼັກການຄຳຮ້ອງທີ່ຍື່ນກ່ອນໝູ່ໂດຍຖືເອົາວັນບູລິມະສິດ (ຖ້າຫາກມີ) ຖ້າຫາກວ່າຄຳຮ້ອງດັ່ງກ່າວນັ້ນຄົບຖ້ວນຕາມເງື່ອນໄຂ ຂອງສຳນວນຄຳຮ້ອງ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 77 ຂອງກົດໝາຍ ວ່າດ້ວຍ ຊັບສິນທາງປັນຍາ.

ໃນການພິຈາລະນາຄຳຮ້ອງ ຖ້າຄຳຮ້ອງທີ່ຍື່ນກ່ອນໄດ້ຮັບການຈົດທະບຽນ ກົມຊັບສິນທາງປັນຍາ ຕ້ອງອອກໜັງສືແຈ້ງປະຕິເສດຄຳຮ້ອງ ຫຼື ບັນດາຄຳຮ້ອງທີ່ໄດ້ຍື່ນຕາມຫຼັງ. ຖ້າຄຳຮ້ອງທີ່ໄດ້ຮັບວັນທີຍື່ນຕາມຫຼັງຫາກສຳເລັດກ່ອນ ແລະ ມີເງື່ອນໄຂໃນການຈົດທະບຽນ, ກົມຊັບສິນທາງປັນຍາຕ້ອງໂຈະການພິຈາລະນາຄຳຮ້ອງດັ່ງກ່າວໄວ້ກ່ອນ ຈົນກວ່າການພິຈາລະນາຄຳຮ້ອງທີ່ຍື່ນກ່ອນຈະສິ້ນສຸດລົງ. ຖ້າຫາກຄຳຮ້ອງທີ່ຍື່ນກ່ອນບໍ່ຕອບສະໜອງຕາມເງື່ອນໄຂ ກົມຊັບສິນທາງປັນຍາຕ້ອງນຳເອົາຄຳຮ້ອງທີ່ໂຈະໄວ້ກ່ອນໜ້ານັ້ນມາພິຈາລະນາ.

ກົມຊັບສິນທາງປັນຍາ ຕ້ອງບໍ່ອອກຄຳເຫັນແນະນຳ ກ່ຽວກັບຄວາມເປັນໄປໄດ້ວ່າພັນພືດທີ່ຂໍຈົດທະບຽນ ສອດຄ່ອງກັບເງື່ອນໄຂທີ່ຈະໄດ້ຮັບການອະນຸມັດ ແລະ ກົມຊັບສິນທາງປັນຍາ ຕ້ອງບໍ່ໃຫ້ຄຳປຶກສາທາງດ້ານກົດໝາຍແກ່ຜູ້ຮ້ອງຂໍຈົດທະບຽນ ແຕ່ຜູ້ຮ້ອງຂໍຈົນທະບຽນ ສາມາດຍື່ນຄຳຮ້ອງຂໍຄົ້ນຫາຂໍ້ມູນ ກ່ຽວກັບພັນພືດໃໝ່ ຢູ່ໃນຖານຂໍ້ມູນ ຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

## ມາດຕາ 11 ເງື່ອນໄຂຕ່ຳສຸດໃນການໄດ້ຮັບວັນທີຍື່ນຄຳຮ້ອງ

ຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ທີ່ມີເງື່ອນໄຂຕ່ຳສຸດ ໃນການໄດ້ຮັບວັນທີຍື່ນຄຳຮ້ອງ ຢ່າງໜ້ອຍຕ້ອງປະກອບດ້ວຍເອກະສານຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1, 5 ແລະ 9 ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງຮັບເອົາຄຳຮ້ອງ, ອອກໃບຮັບຄຳຮ້ອງຊຶ່ງລະບຸ ເລກທີ ແລະ ວັນທີຍື່ນຄຳຮ້ອງໃນເມື່ອເຫັນວ່າຄຳຮ້ອງຫາກສອດຄ່ອງຕາມເງື່ອນໄຂຕ່ຳສຸດ.

## ມາດຕາ 12 ການກວດສອບເບື້ອງຕົ້ນ

ກົມຊັບສິນທາງປັນຍາ ຕ້ອງດຳເນີນການກວດສອບເບື້ອງຕົ້ນ ພາຍຫຼັງ ຮັບຄຳຮ້ອງຂໍຈົດທະບຽນພັນພືດໃໝ່ແລ້ວ ຕາມເງື່ອນໄຂດັ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 77 ຂອງກົດໝາຍວ່າດ້ວຍ ຊັບສິນທາງປັນຍາ. ການກວດສອບເບື້ອງຕົ້ນຕ້ອງດຳເນີນການ ພາຍໃນກຳນົດ ເວລາ 30 ວັນ ນັບແຕ່ວັນຮັບຄຳຮ້ອງເປັນຕົ້ນໄປ ໂດຍຜູ້ຮ້ອງຂໍຈົດທະບຽນຕ້ອງຈ່າຍຄ່າບໍລິການ.

ໃນກໍລະນີ ສຳນວນຄຳຮ້ອງ ຫາກບໍ່ຄົບຖ້ວນ ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນຊາບເພື່ອສະໜອງໃຫ້ຄົບຖ້ວນ ຫຼື ດັດແກ້ ໃຫ້ທັນຕາມກຳນົດເວລາ 60 ວັນ ນັບແຕ່ວັນທີ່ອອກແຈ້ງການຂອງກົມເປັນຕົ້ນໄປ. ຖ້າຜູ້ຮ້ອງຂໍຈົດທະບຽນບໍ່ສາມາດປະຕິບັດຕາມແຈ້ງການ ກົມຊັບສິນທາງປັນຍາ ຕ້ອງບໍ່ພິຈາລະນາສຳນວນຄຳຮ້ອງດັ່ງກ່າວ ແລະ ແຈ້ງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍຈົດທະບຽນຊາບ.

ກົມຊັບສິນທາງປັນຍາ ຕ້ອງຕໍ່ເວລາໃຫ້ຕື່ມອີກ 30 ວັນ ນັບແຕ່ວັນສິ້ນສຸດແຈ້ງການຄັ້ງທຳອິດເປັນຕົ້ນໄປ ຖ້າຫາກຜູ້ຮ້ອງຂໍຈົດທະບຽນ ມີເຫດຜົນພຽງພໍ.

ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນພັນພືດໃໝ່ ໃນກໍລະນີ ສຳນວນຄຳຮ້ອງດັ່ງກ່າວ ຄົບຖ້ວນຕາມການກວດສອບເບື້ອງຕົ້ນ.

## ມາດຕາ 13 ການກຳນົດຊື່ຂອງພັນພືດໃໝ່

ການກຳນົດຊື່ຂອງພັນພືດໃໝ່ ນອກຈາກທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ຂອງ ມາດຕາ 74 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍການກຳນົດຊື່ໃໝ່ຕ້ອງແຕກຕ່າງຈາກຊື່ຂອງພັນພືດ ທີ່ໄດ້ຮັບການປົກປ້ອງ ຢູ່ ສປປ ລາວ ຫຼື ຢູ່ໃນປະເທດທີ່ເປັນພາຄີຂອງສັນຍາສາກົນທີ່ ສປປ ລາວ ຈະເປັນພາຄີ.

ກົມຊັບສິນທາງປັນຍາ ຕ້ອງປະຕິເສດຊື່ດັ່ງກ່າວ ແລະ ຕ້ອງແຈ້ງໃຫ້ນັກປະສົມພັນພືດ ຫຼື ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ກຳນົດຊື່ຄືນໃໝ່ພາຍໃນກຳນົດເວລາ 15 ວັນ ຖ້າເຫັນວ່າການກຳນົດຊື່ບໍ່ສອດຄ່ອງຕາມທີ່ໄດ້ກຳ

ນົດໄວ້ໃນວັກ 2, ມາດຕາ 74 ຂອງກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ແລະ ວັກ 1 ຂອງ ມາດຕານີ້.

ນອກນັ້ນ ການກຳນົດຊື່ຂອງພັນພືດໃໝ່ ຍັງຕ້ອງປະຕິບັດຕາມເງື່ອນໄຂລຸ່ມນີ້:

1. ຕ້ອງບໍ່ເປັນພຽງແຕ່ຕົວເລກ ຍົກເວັ້ນແຕ່ກໍລະນີ ການຕັ້ງຊື່ເປັນຕົວເລກ ໄດ້ກາຍເປັນທຳນຽມປະຕິບັດມາກ່ອນແລ້ວ;
2. ຕ້ອງບໍ່ແຕະຕ້ອງສິດກ່ອນໜ້າຂອງບຸກຄົນທີສາມ. ຖ້າການກຳນົດຊື່ຂອງພັນພືດໃໝ່ຫາກຊໍ້າກັບຊື່ທີ່ໄດ້ຮັບການປົກປ້ອງແລ້ວ ກົມຊັບສິນທາງປັນຍາ ຕ້ອງສະເໜີໃຫ້ຜູ້ຮ້ອງຂໍຈົດທະບຽນ ກຳນົດຊື່ຄືນໃໝ່.
3. ຕ້ອງສົ່ງຊື່ຂອງພັນພືດໃໝ່ໃຫ້ສະມາຊິກຂອງອົງການຈັດຕັ້ງສາກົນສຳລັບການປົກປ້ອງພັນພືດໃໝ່ທີ່ ສປປ ລາວ ຈະເປັນພາຄີ. ກົມຊັບສິນທາງປັນຍາ ຕ້ອງຈົດທະບຽນຊື່ຂອງພັນພືດໃໝ່ຕາມທີ່ໄດ້ສົ່ງໃຫ້ສະມາຊິກຂອງອົງການຈັດຕັ້ງດັ່ງກ່າວ, ຍົກເວັ້ນການກຳນົດຊື່ຂອງພັນພືດໃໝ່ນັ້ນບໍ່ເໝາະສົມ ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ນັກປະສົມພັນພືດ ຫຼື ຜູ້ຮ້ອງຂໍຈົດທະບຽນ ກຳນົດຊື່ຄືນໃໝ່.
4. ພາຍຫຼັງ ກົມຊັບສິນທາງປັນຍາ ໄດ້ຮັບຄຳຮ້ອງຂໍຈົດທະບຽນພັນພືດໃໝ່, ການຈົດທະບຽນ ແລະ ການຍົກເລີກການກຳນົດຊື່ຂອງພັນພືດໃໝ່ ແລ້ວຕ້ອງແຈ້ງໃຫ້ສະມາຊິກຂອງອົງການຈັດຕັ້ງສາກົນສຳລັບການປົກປ້ອງພັນພືດໃໝ່ທີ່ ສປປ ລາວ ຈະເປັນພາຄີຮັບຊາບ ແລະ ປະກອບຄຳເຫັນ ກ່ຽວກັບ ການຂໍກຳນົດຊື່ຂອງພັນພືດໃໝ່.

**ມາດຕາ 14 ການເຜີຍແຜ່ຄຳຮ້ອງ ແລະ ການສະເໜີຂໍຄັດຄ້ານການຂໍຈົດທະບຽນພັນພືດໃໝ່**

ພາຍຫຼັງ ກົມຊັບສິນທາງປັນຍາ ໄດ້ສຳເລັດການກວດສອບເບື້ອງຕົ້ນ ຕ້ອງເຜີຍແຜ່ຂໍ້ມູນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນພັນພືດໃໝ່ ພາຍໃນກຳນົດເວລາ 15 ວັນ ປະກອບມີດັ່ງນີ້:

1. ເລກທີ ແລະ ວັນທີ ຍື່ນຄຳຮ້ອງ;
2. ຊື່ ແລະ ທີ່ຢູ່ ຂອງນັກປະສົມພັນພືດ;
3. ຊື່ ແລະ ທີ່ຢູ່ ຂອງຜູ້ຍື່ນຄຳຮ້ອງ;
4. ບົດສັງເຂບກ່ຽວກັບພັນພືດໃໝ່;
5. ຊື່ພັນພືດໃໝ່.

ບຸກຄົນທີສາມ ສາມາດສະເໜີຄັດຄ້ານຄຳຮ້ອງຂໍຈົດທະບຽນດັ່ງກ່າວ ພາຍໃນໄລຍະເວລາ 90 ວັນ ນັບແຕ່ວັນທີໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນພັນພືດໃໝ່. ໂດຍຍື່ນຄຳສະເໜີຂໍຄັດຄ້ານ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ, ຊຶ່ງສຳນວນຄຳສະເໜີຂໍຄັດຄ້ານການຈົດທະບຽນພັນພືດໃໝ່ ຕ້ອງປະກອບມີເອກະສານດັ່ງນີ້:

1. ຄຳສະເໜີຂໍຄັດຄ້ານ ຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ຫຼື ການກຳນົດຊື່;
2. ເອກະສານ ແລະ ຫຼັກຖານຊີ້ແຈງ ກ່ຽວກັບການຂໍຄັດຄ້ານ;
3. ໃບຮັບເງິນຄ່າບໍລິການ.

**ມາດຕາ 15 ການພິຈາລະນາຄຳສະເໜີຂໍຄັດຄ້ານການຂໍຈົດທະບຽນພັນພືດໃໝ່.**

ການພິຈາລະນາຄຳສະເໜີຂໍຄັດຄ້ານການຈົດທະບຽນພັນພືດໃໝ່ ມີຂັ້ນຕອນດັ່ງນີ້:

1. ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ເຈົ້າຂອງຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ທີ່ຖືກຄັດຄ້ານນັ້ນຊາບຢ່າງທັນການພາຍຫຼັງໄດ້ຮັບຄຳສະເໜີຂໍຄັດຄ້ານ;

2. ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ຕ້ອງ ຍື່ນຄໍາຊີ້ແຈງພ້ອມດ້ວຍຂໍ້ມູນຫຼັກຖານ ກ່ຽວກັບພັນພືດຂອງຕົນເຖິງກົມຊັບສິນທາງປັນຍາພາຍໃນກໍານົດເວລາ 60 ວັນ ນັບແຕ່ວັນທີ່ໄດ້ອອກແຈ້ງການ ກ່ຽວກັບການຄັດຄ້ານດັ່ງກ່າວ;
3. ກົມຊັບສິນທາງປັນຍາ ຕ້ອງສົ່ງສໍາເນົາຄໍາຊີ້ແຈງນັ້ນໃຫ້ຜູ້ຂໍຄັດຄ້ານຊາບ;
4. ກົມຊັບສິນທາງປັນຍາ ຕ້ອງພິຈາລະນາຄໍາຊີ້ແຈງ ແລະ ຂໍ້ມູນຫຼັກຖານດັ່ງກ່າວ;
5. ກົມຊັບສິນທາງປັນຍາ ຕ້ອງອອກໜັງສືເຊີນໃຫ້ຄູ່ກໍລະນີມາຊີ້ແຈງ, ສະແດງຫຼັກຖານ ຫຼື ສະໜອງຂໍ້ມູນເພີ່ມເຕີມ ໃນກໍລະນີຂໍ້ມູນຫຼັກຖານຂອງຜູ້ຂໍຄັດຄ້ານ ແລະ ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ຫາກບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນ;
6. ກົມຊັບສິນທາງປັນຍາ ຕ້ອງພິຈາລະນາການຄັດຄ້ານຕາມຫຼັກຖານທີ່ມີ ຖ້າຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ຫຼື ຜູ້ຂໍຄັດຄ້ານ ບໍ່ມາຊີ້ແຈງ ແລະ ສະແດງຫຼັກຖານ ຫຼື ສະໜອງຂໍ້ມູນເພີ່ມເຕີມ ພາຍໃນເວລາ 60 ວັນ ນັບແຕ່ວັນອອກໜັງສືເຊີນ ຂອງກົມ;
7. ກົມຊັບສິນທາງປັນຍາ ຕ້ອງແຈ້ງຜົນການພິຈາລະນາພ້ອມດ້ວຍເຫດຜົນໃຫ້ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ແລະ ຜູ້ສະເໜີຂໍຄັດຄ້ານຊາບ;
8. ກົມຊັບສິນທາງປັນຍາ ຕ້ອງປະຕິເສດຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ໃນກໍລະນີກົມຊັບສິນທາງປັນຍາພິຈາລະນາແລ້ວເຫັນວ່າ ການຄັດຄ້ານມີເຫດຜົນ ແລະ ມີຫຼັກຖານພຽງພໍ;
9. ກົມຊັບສິນທາງປັນຍາ ຕ້ອງສືບຕໍ່ພິຈາລະນາຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ໃນກໍລະນີກົມຊັບສິນທາງປັນຍາພິຈາລະນາແລ້ວເຫັນວ່າ ການຄັດຄ້ານບໍ່ມີເຫດຜົນ ແລະ ບໍ່ມີຫຼັກຖານພຽງພໍ;
10. ຄູ່ກໍລະນີທີ່ບໍ່ພໍໃຈຕໍ່ການພິຈາລະນາດັ່ງກ່າວ ສາມາດສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານເຖິງຄະນະກໍາມະການພິຈາລະນາຂັ້ນສຸດທ້າຍ ຂອງກົມຊັບສິນທາງປັນຍາ ພາຍໃນກໍານົດເວລາ 60 ວັນ ນັບແຕ່ມື້ອອກແຈ້ງການຂອງກົມເປັນຕົ້ນໄປ.

**ມາດຕາ 16 ການກວດສອບເນື້ອໃນ**

ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ສາມາດສະເໜີໃຫ້ກົມຊັບສິນທາງປັນຍາ ກວດສອບເນື້ອໃນ ໃນກໍລະນີທີ່ໄດ້ຍື່ນຄໍາຮ້ອງ ຢູ່ກົມຊັບສິນທາງປັນຍາແລ້ວ ໂດຍປະກອບຕາມແບບພິມຂອງກົມ ພ້ອມທັງຈ່າຍ ຄ່າບໍລິການ.

ໃນກໍລະນີ ທີ່ໄດ້ຍື່ນຄໍາຮ້ອງ ຢູ່ປະເທດອື່ນ ຫຼື ອົງການຈັດຕັ້ງລະຫວ່າງລັດຖະບານ, ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ຕ້ອງສະໜອງບົດລາຍງານການກວດສອບທີ່ໄດ້ຮັບການຮັບຮອງຈາກອົງການປົກປ້ອງພັນພືດໃໝ່ໃນປະເທດນັ້ນ ຫຼື ອົງການຈັດຕັ້ງດັ່ງກ່າວນັ້ນ ໃຫ້ກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງດໍາເນີນການກວດສອບເນື້ອໃນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 80 ຂອງກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ເພື່ອພິຈາລະນາວ່າ ຄໍາຮ້ອງນັ້ນສອດຄ່ອງຕາມເງື່ອນໄຂທີ່ກໍານົດໄວ້ໃນ ມາດຕາ 70, 71, 72 ແລະ 73 ຂອງກົດໝາຍວ່າດ້ວຍ ຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຈະປະຕິເສດການຈົດທະບຽນພັນພືດໃໝ່ ໃນກໍລະນີ ສໍານວນຄໍາຮ້ອງດັ່ງກ່າວຫາກບໍ່ສອດຄ່ອງຕາມເງື່ອນໄຂການຈົດທະບຽນພັນພືດໃໝ່ ແລະ ຕ້ອງແຈ້ງເຫດຜົນໃນການປະຕິເສດເບື້ອງຕົ້ນໃຫ້ຜູ້ຍື່ນຄໍາຮ້ອງຊາບ.

ຄ່າກວດສອບເນື້ອໃນຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ແມ່ນຂຶ້ນກັບມູນຄ່າຕົວຈິງຂອງການກວດສອບທີ່ເຈົ້າຂອງຄໍາຮ້ອງຈະຕ້ອງຈ່າຍໃຫ້ໜ່ວຍງານທົດລອງພັນພືດ ທີ່ກ່ຽວຂ້ອງໃດໜຶ່ງທີ່ສົ່ງໄປກວດສອບ. ສໍາລັບບັນຊີລາຍຊື່ໜ່ວຍງານທົດລອງພັນພືດທີ່ກ່ຽວຂ້ອງ ດໍາເນີນການທົດລອງປູກພັນພືດ ໄດ້ກໍານົດໄວ້ໃນ ບົດແນະນໍາຂອງກົມ.

**ມາດຕາ 17 ການດັດແກ້ຄຳຮ້ອງ**

ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ສາມາດດັດແກ້ຄຳຮ້ອງໄດ້ທຸກເວລາ ໃນໄລຍະເວລາຂອງການກວດສອບ, ແຕ່ຕ້ອງດຳເນີນກ່ອນການຈົດທະບຽນ, ການສະຫຼະສິດ, ການປະຕິເສດຂັ້ນສຸດທ້າຍ ຫຼື ການສິ້ນສຸດການພິຈາລະນາ ຄຳຮ້ອງນັ້ນ ໂດຍບໍ່ຕ້ອງຈ່າຍ ຄ່າທຳນຽມ ຫຼື ຄ່າບໍລິການ. ການດັດແກ້ ຕ້ອງບໍ່ໃຫ້ມີການປ່ຽນແປງຂໍ້ມູນທາງດ້ານເຕັກນິກ ຢູ່ໃນຄຳຮ້ອງຕົ້ນສະບັບ.

**ມາດຕາ 18 ການຈົດທະບຽນພັນພືດໃໝ່**

ກົມຊັບສິນທາງປັນຍາ ຕ້ອງຈົດທະບຽນພັນພືດໃໝ່, ບັນທຶກຂໍ້ມູນທີ່ກ່ຽວຂ້ອງ ລົງໃນປຶ້ມບັນທຶກການຈົດທະບຽນ ແລະ ຖານຂໍ້ມູນຂອງກົມຊັບສິນທາງປັນຍາ ໃນເມື່ອສຳນວນຄຳຮ້ອງສອດຄ່ອງຕາມເງື່ອນໄຂການຈົດທະບຽນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້ ຫຼື ຄຳຮ້ອງຂໍຈົດທະບຽນໄດ້ຜ່ານຂະບວນການຄັດຄ້ານ ແຕ່ການຄັດຄ້ານນັ້ນ ບໍ່ເປັນຜົນ.

ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ຕ້ອງຈ່າຍຄ່າທຳນຽມການອອກໃບຢັ້ງຢືນການຈົດທະບຽນພັນພືດໃໝ່ ສຳລັບການປົກປ້ອງສີ່ປີທຳອິດຂອງການຈົດທະບຽນພັນພືດໃໝ່.

**ມາດຕາ 19 ການເຜີຍແຜ່ຜົນຂອງການຈົດທະບຽນ**

ກົມຊັບສິນທາງປັນຍາຕ້ອງ ເຜີຍແຜ່ຜົນຂອງການຈົດທະບຽນພັນພືດໃໝ່ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບ ການຈົດທະບຽນພັນພືດໃໝ່ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 81 ຂອງກົດໝາຍວ່າດ້ວຍ ຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນທີ່ຖືກດັດແກ້ຄືນໃໝ່ ໃນກໍລະນີຜູ້ຮ້ອງຂໍຈົດທະບຽນສະເໜີຫາກົມຊັບສິນທາງປັນຍາ ວ່າການເຜີຍແຜ່ຜົນຂອງການຈົດທະບຽນພັນພືດໃໝ່ ຄັ້ງທຳອິດນັ້ນມີຂໍ້ມູນຜິດພາດທີ່ເກີດຈາກຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ຫຼື ກົມຊັບສິນທາງປັນຍາ. ການສະເໜີດັ່ງກ່າວ ຕ້ອງດຳເນີນການພາຍໃນ 60 ວັນ ນັບແຕ່ວັນເຜີຍແຜ່ຄັ້ງທຳອິດເປັນຕົ້ນໄປ ແລະ ບໍ່ໄດ້ຈ່າຍຄ່າບໍລິການ.

ຜູ້ຮ້ອງຂໍຈົດທະບຽນ ສາມາດສະເໜີໃຫ້ ກົມຊັບສິນທາງປັນຍາ ເຜີຍແຜ່ຜົນຂອງການໂອນສິດ ຖ້າຫາກວ່າ ໄດ້ມີການໂອນສິດຕໍ່ພັນພືດໃໝ່, ພາຍຫຼັງທີ່ຜູ້ຮ້ອງຂໍຈົດທະບຽນ ໄດ້ສະໜອງຂໍ້ມູນທີ່ກ່ຽວຂ້ອງໃຫ້ກົມ ຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

## ໝວດທີ 3
## ການດຳເນີນການຫຼັງການຈົດທະບຽນພັນພືດໃໝ່

**ມາດຕາ 20 ການຮັກສາອາຍຸການປົກປ້ອງ**

ເພື່ອຮັກສາອາຍຸການປົກປ້ອງພັນພືດໃໝ່ ສຳລັບປີທີ 5 ແລະ ປີຖັດໄປ ເຈົ້າຂອງພັນພືດໃໝ່ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການລ່ວງໜ້າ ເປັນແຕ່ລະປີ ກ່ອນວັນໝົດອາຍຸການປົກປ້ອງຂອງແຕ່ລະປີ.

ໃນກໍລະນີ ທີ່ມື້ສຸດທ້າຍຂອງອາຍຸການປົກປ້ອງພັນພືດໃໝ່ ຫາກເປັນວັນພັກທາງລັດຖະການ ຫຼື ເປັນວັນທີ່ກົມຊັບສິນທາງປັນຍາບໍ່ຮັບຄຳຮ້ອງ ກໍ່ຕ້ອງຕໍ່ໄລຍະເວລາດັ່ງກ່າວອອກໄປ ຈົນເຖິງວັນລັດຖະການທຳອິດຖັດໄປ.

**ມາດຕາ 21 ການປ່ຽນແປງຂໍ້ມູນຫຼັງການຈົດທະບຽນພັນພືດໃໝ່**

ເຈົ້າຂອງພັນພືດໃໝ່ ສາມາດຍື່ນຄຳຮ້ອງຢູ່ນຳກົມຊັບສິນທາງປັນຍາ ເພື່ອປ່ຽນແປງຂໍ້ມູນກ່ຽວກັບ ຊື່ ຫຼື ທີ່ຢູ່ ຂອງຕົນ ຕາມແບບພິມ ຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ. ຜູ້ຍື່ນຄຳຮ້ອງຕ້ອງສະໜອງຂໍ້ມູນ ໃຫ້ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງບັນທຶກທຸກການປ່ຽນແປງລົງໃນຖານຂໍ້ມູນ, ປື້ມບັນທຶກການຈົດທະບຽນ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນພັນພືດໃໝ່.

**ມາດຕາ 22 ການຂໍສຳເນົາໃບຢັ້ງຢືນການຈົດທະບຽນພັນພືດໃໝ່**

ເຈົ້າຂອງພັນພືດໃໝ່ ສາມາດຂໍສຳເນົາໃບຢັ້ງຢືນການຈົດທະບຽນພັນພືດໃໝ່ ແມ່ນເພື່ອນຳໃຊ້ເປັນຫຼັກຖານໃນ ການດຳເນີນຄະດີຢູ່ສານ, ການຈົດທະບຽນພັນພືດໃໝ່ຢູ່ຕ່າງປະເທດ ແລະ ໃຊ້ແທນໃບຢັ້ງຢືນການຈົດທະບຽນທີ່ເສຍຫາຍ ຫຼື ເສຍ ຊຶ່ງເຈົ້າຂອງພັນພືດໃໝ່ທີ່ໄດ້ຈົດທະບຽນ ສາມາດຍື່ນຄຳຮ້ອງຢູ່ນຳກົມຊັບສິນທາງປັນຍາ ເພື່ອຂໍສຳເນົາໃບຢັ້ງຢືນການຈົດທະບຽນ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 23 ການດັດແກ້ພາຍຫຼັງການຈົດທະບຽນພັນພືດໃໝ່**

ພາຍຫຼັງພັນພືດໃໝ່ ໄດ້ຮັບການຈົດທະບຽນແລ້ວເຈົ້າຂອງພັນພືດໃໝ່ ສາມາດຍື່ນຄຳຮ້ອງຂໍດັດແກ້ຂໍ້ມູນບາງສ່ວນ ຢູ່ໃນສຳນວນເອກະສານ ກ່ຽວກັບຄຸນລັກສະນະພັນພືດໃໝ່ ຫຼື ດັດແກ້ບາງຂໍ້ຜິດພາດໃນຄຳຮ້ອງຂໍຈົດທະບຽນ ໂດຍຍື່ນຄຳຮ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ. ຊຶ່ງການດັດແກ້ດັ່ງກ່າວ ກົມຊັບສິນທາງປັນຍາອະນຸຍາດໃຫ້ດັດແກ້ໄດ້ພຽງສ່ວນໜ້ອຍ. ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນ ກ່ຽວກັບການດັດແກ້ດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະ ບຽນພັນພືດໃໝ່.

ກົມຊັບສິນທາງປັນຍາ ຈະອະນຸຍາດໃຫ້ດັດແກ້ຕາມຄຳຮ້ອງ ຖ້າຫາກວ່າແມ່ນການສະເໜີດັດແກ້ພຽງສ່ວນນ້ອຍ, ແຕ່ຖ້າການດັດແກ້ຫາກມີການປ່ຽນແປງລາຍການໃນສຳນວນເອກະສານ ກ່ຽວກັບຄຸນລັກສະນະພັນພືດໃໝ່ ເຈົ້າຂອງພັນພືດໃໝ່ຈະຕ້ອງຍື່ນຄຳຮ້ອງມາໃໝ່ ແລະ ໃຫ້ປະຕິບັດຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນ ໝວດ 2 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 24 ການຍົກເລີກການຈົດທະບຽນພັນພືດໃໝ່**

ບຸກຄົນທີສາມ ມີສິດຍື່ນຄຳຮ້ອງຂໍຍົກເລີກ ຫຼື ລຶບລ້າງ ການຈົດທະບຽນພັນພືດໃໝ່ ນັບແຕ່ວັນເຜີຍແຜ່ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນພັນພືດໃໝ່ ເປັນຕົ້ນໄປ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 81 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ການຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນພັນພືດໃໝ່ ໃຫ້ປະຕິບັດຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ເຈົ້າຂອງພັນພືດໃໝ່ຊາບ ໃນເມື່ອໄດ້ຮັບຄຳສະເໜີຄັດຄ້ານຈາກບຸກຄົນທີສາມ.

ເຈົ້າຂອງພັນພືດໃໝ່ສາມາດຍື່ນຄຳຊີ້ແຈງເຖິງກົມຊັບສິນທາງປັນຍາ ພາຍໃນເວລາ 60 ວັນ ນັບແຕ່ວັນທີອອກແຈ້ງການຂອງກົມເປັນຕົ້ນໄປ.

ໃນກໍລະນີ ເຈົ້າຂອງພັນພືດໃໝ່ ຫາກບໍ່ມີຄຳຊີ້ແຈງໃດໆໃຫ້ຖືວ່າເຈົ້າຂອງພັນພືດໃໝ່ນັ້ນຍິນຍອມຕໍ່

ການຍົກເລີກການຈົດທະບຽນພັນພືດໃໝ່ຂອງຕົນ, ກົມຊັບສິນທາງປັນຍາ ຕ້ອງອອກໜັງສືຍົກເລີກການຈົດທະບຽນພັນພືດໃໝ່ ແລະ ແຈ້ງໃຫ້ເຈົ້າຂອງພັນພືດໃໝ່ຊາບ.

ກົມຊັບສິນທາງປັນຍາ ຕ້ອງຍົກເລີກການຈົດທະບຽນພັນພືດໃໝ່, ໃນກໍລະນີທີ່ບຸກຄົນທີສາມ ຫາກມີການຮ້ອງຟ້ອງຕໍ່ສານປະຊາຊົນ ແລະ ມີຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ມີການຍົກເລີກການຈົດທະບຽນພັນພືດໃໝ່ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 139 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ການຮ້ອງຟ້ອງສາມາດຍື່ນເວລາໃດກໍ່ໄດ້ຕະຫຼອດໄລຍະການປົກປ້ອງພັນພືດໃໝ່ຍັງມີຜົນສັກສິດຢູ່.

ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການ ກ່ຽວກັບຜົນການພິຈາລະນາຂອງຕົນ ຫຼື ຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນ ກ່ຽວກັບການເປັນໂມຄະ ຫຼື ການຍົກເລີກ ສໍານວນຄໍາຮ້ອງ ແລະ ຜົນການຈົດທະບຽນພັນພືດໃໝ່ ໃຫ້ເຈົ້າຂອງພັນພືດໃໝ່ ແລະ ບຸກຄົນທີ່ສາມທີ່ຮ້ອງຂໍ ຍົກເລີກ ຫຼື ລົບລ້າງ ຊາບ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກ ຜົນການຍົກເລີກ ຫຼື ລົບລ້າງ ລົງໃນຖານຂໍ້ມູນ, ປຶ້ມບັນທຶກການຈົດທະບຽນ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນພັນພືດໃໝ່.

**ມາດຕາ 25 ການໂອນສິດ ແລະ ການບັນທຶກຂໍ້ມູນການໂອນສິດ**

ເຈົ້າຂອງພັນພືດໃໝ່ ສາມາດໂອນສິດຂອງຕົນ ທັງໝົດ ຫຼື ບາງສ່ວນ ດ້ວຍການເຮັດສັນຍາ, ການສືບທອດມູນມໍລະດົກ ຫຼື ການໃຫ້ເປັນຂອງຂວັນ.

ໃນການໂອນສິດຕໍ່ພັນພືດໃໝ່, ຜູ້ໂອນສິດ ຫຼື ຜູ້ຮັບໂອນສິດ ຕ້ອງ:

1. ແຈ້ງໃຫ້ກົມຊັບສິນທາງປັນຍາຊາບ ເພື່ອບັນທຶກການໂອນສິດ ພ້ອມທັງຈ່າຍຄ່າບໍລິການ;
2. ກໍານົດເນື້ອໃນຂອງການໂອນສິດໃສ່ໃນເອກະສານການໂອນສິດດັ່ງກ່າວ.

ການໂອນກໍາມະສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ຖືວ່າແມ່ນການໂອນສິດຕໍ່ ພັນພືດໃໝ່ທັງໝົດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວນັ້ນ ໃນກໍລະນີທີ່ບໍ່ໄດ້ກໍານົດໄວ້ເປັນຢ່າງອື່ນ.

ການໂອນສິດ ຈະບໍ່ມີຜົນສັກສິດຕໍ່ຄູ່ກໍລະນີ ຈົນກວ່າກົມຊັບສິນທາງປັນຍາ ຈະບັນທຶກການໂອນສິດດັ່ງກ່າວ, ເວັ້ນເສຍແຕ່ພວກກ່ຽວຈະມີໜັງສື ກ່ຽວກັບການໂອນສິດດັ່ງກ່າວມາກ່ອນແລ້ວ.

**ມາດຕາ 26 ການອະນຸຍາດນໍາໃຊ້ສິດຕໍ່ພັນພືດໃໝ່**

ເຈົ້າຂອງພັນພືດໃໝ່ ສາມາດອະນຸຍາດໃຫ້ບຸກຄົນອື່ນນໍາໃຊ້ສິດຕໍ່ພັນພືດໃໝ່ຂອງຕົນ ເພື່ອສະແຫວງຫາຜົນປະໂຫຍດ ບາງສ່ວນ ຫຼື ທັງໝົດ ຂອງສິດຕໍ່ພັນພືດໃໝ່ ຊຶ່ງສາມາດດໍາເນີນໂດຍການເຮັດສັນຍາການອະນຸຍາດນໍາໃຊ້ສິດ ແຕ່ບໍ່ຖືເປັນການໂອນກໍາມະສິດຕໍ່ພັນພືດໃໝ່ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 82 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ຜູ້ໄດ້ຮັບອະນຸຍາດນໍາໃຊ້ສິດ ຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາຊາບ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກ ແລະ ອອກໜັງສື ກ່ຽວກັບການອະນຸຍາດນໍາໃຊ້ສິດຕໍ່ພັນພືດໃໝ່ ໃຫ້ແກ່ຜູ້ໄດ້ຮັບສິດນໍາໃຊ້.

ກໍລະນີ ສິດຕໍ່ພັນພືດໃໝ່ຫາກມີຫຼາຍຄົນຖືສິດຮ່ວມກັນ, ການອະນຸຍາດນໍາໃຊ້ສິດຕ້ອງໄດ້ຮັບການຕົກລົງຈາກເຈົ້າຂອງສິດທຸກຄົນ.

**ມາດຕາ 27 ການຈໍາກັດການນໍາໃຊ້ສິດຕໍ່ພັນພືດເພື່ອສາທາລະນະປະໂຫຍດ**

ການນໍາໃຊ້ສິດຕໍ່ພັນພືດທີ່ໄດ້ຮັບການປົກປ້ອງ ເພື່ອສາທາລະນະປະໂຫຍດແມ່ນນໍາໃຊ້ ໃນກໍລະນີ ທີ່ລັດຖະບານໄດ້ອອກແຈ້ງການ ກ່ຽວກັບເຫດການສຸກເສີນ ເປັນຕົ້ນ ໄພພິບັດທາງທໍາມະຊາດ, ການລະບາດຂອງພະຍາດ, ສົງຄາມ ແລະ ການແຜ່ຂະຫຍາຍທາງມົນລະພິດດ້ານສິ່ງແວດລ້ອມ.

ພາຍຫຼັງໄດ້ຮັບການປະສານງານຈາກຂະແໜງການທີ່ກ່ຽວຂ້ອງ ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການກ່ຽວກັບການຈຳກັດການນຳໃຊ້ສິດຕໍ່ພັນພືດເພື່ອສາທາລະນະປະໂຫຍດ ໂດຍລະບຸ ຊື່ພັນພືດໃໝ່ທີ່ໄດ້ຮັບການປົກປ້ອງ ເພື່ອສາທາລະນະປະໂຫຍດ, ຈຸດປະສົງ ແລະ ປະລິມານທີ່ຕ້ອງການ, ຂອບເຂດ ແລະ ໄລຍະເວລາສຳລັບການອະນຸຍາດນຳໃຊ້ ລວມທັງ ກຳນົດໄລຍະເວລາຂອງການຍື່ນຄຳຮ້ອງຂໍນຳໃຊ້ສິດຕໍ່ພັນພືດ ໃໝ່ທີ່ໄດ້ຮັບການປົກປ້ອງ.

ສຳນວນຄຳຮ້ອງຂໍອະນຸຍາດ ນຳໃຊ້ສິດຕໍ່ພັນພືດໃໝ່ທີ່ໄດ້ຮັບການປົກປ້ອງ ຕ້ອງປະກອບມີ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດນຳໃຊ້ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ໃບຢັ້ງຢືນການອະນຸຍາດດຳເນີນທຸລະກິດຈາກພາກສ່ວນທີ່ກ່ຽວຂ້ອງ;
3. ໃບຢັ້ງຢືນຖານະການເງິນ;
4. ເອກະສານຫຼັກຖານທີ່ສະແດງໃຫ້ເຫັນເຫດການສຸກເສີນທີ່ເກີດຂຶ້ນ;
5. ໃບມອບສິດ ໃນກໍລະນີຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ;
6. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ນອກຈາກນັ້ນ ການຈຳກັດສິດເພື່ອສາທາລະນະປະໂຫຍດ ຍັງນຳໃຊ້ກັບ ການລະເມີດ ກົດໝາຍວ່າດ້ວຍການແຂ່ງຂັນທາງທຸລະກິດ.

ຜູ້ໄດ້ຮັບອະນຸຍາດນຳໃຊ້ພັນພືດໃໝ່ທີ່ໄດ້ຮັບການປົກປ້ອງ ຕ້ອງຈ່າຍຄ່າຕອບແທນທີ່ເປັນທຳ ຫຼື ເໝາະສົມໃຫ້ແກ່ເຈົ້າຂອງສິດ.

## ໝວດທີ 4
## ການເປັນຜູ້ຕາງໜ້າໃນການຈົດທະບຽນພັນພືດໃໝ່ ແລະ ດຳເນີນການອື່ນ

### ມາດຕາ 28 ບຸກຄົນທີ່ມີສິດເປັນຜູ້ຕາງໜ້າໃນການຈົດທະບຽນພັນພືດໃໝ່ ແລະ ດຳເນີນການອື່ນ

ບຸກຄົນທີ່ມີສິດຕາງໜ້າໃຫ້ແກ່ຜູ້ທີ່ມີສິດໄດ້ຮັບການປົກປ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ເພື່ອດຳເນີນການຈົດທະບຽນ ແລະ ດຳເນີນການອື່ນ ມີດັ່ງນີ້:

1. ໃນກໍລະນີ ຄຳຮ້ອງດຽວທີ່ມີເຈົ້າຂອງຮ່ວມກັນຫຼາຍຄົນ, ຕ້ອງແຕ່ງຕັ້ງບຸກຄົນໃດໜຶ່ງໃນນັ້ນເປັນຜູ້ຕາງໜ້າຍື່ນຄຳຮ້ອງໃຫ້ພວກກ່ຽວ;
2. ທະນາຍຄວາມທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການ ທາງດ້ານກົດໝາຍຢູ່ໃນ ສປປ ລາວ;
3. ຜູ້ປະກອບການທາງດ້ານຊັບສິນທາງປັນຍາ;
4. ຜູ້ຕາງໜ້າ ຫຼື ພະນັກງານ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ບຸກຄົນທົ່ວໄປທີ່ຜູ້ຮ້ອງຂໍຈົດທະບຽນວ່າຈ້າງ.

ສຳລັບ ຜູ້ຮ້ອງຂໍຈົດທະບຽນ ທີ່ເປັນຄົນຕ່າງປະເທດ ຕ້ອງຍື່ນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ຜ່ານຜູ້ປະກອບການທາງດ້ານຊັບສິນທາງປັນຍາ ຫຼື ທະນາຍຄວາມທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍໃນ ສປປ ລາວ ເທົ່ານັ້ນ.

ບຸກຄົນທີ່ມີສິດເປັນຜູ້ຕາງໜ້າ ຕ້ອງມີຄວາມຮູ້ດ້ານຊັບສິນທາງປັນຍາ ແລະ ມີທີ່ຢູ່ ສປປ ລາວ ແລະ ຕ້ອງໄດ້ ຮັບອະນຸຍາດ ຫຼື ຮັບຮອງ ຈາກກົມຊັບສິນທາງປັນຍາ.

### ມາດຕາ 29 ການແຕ່ງຕັ້ງຜູ້ຕາງໜ້າ

ຜູ້ຕາງໜ້າ ຕ້ອງແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຕາມໃບມອບສິດ ທີ່ມີລາຍເຊັນຂອງຜູ້ຮ້ອງຂໍຈົດ

ທະບຽນ ຫຼື ຜູ້ມອບສິດ.

ໃນກໍລະນີ ທີ່ຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ຫາກຍື່ນຮ່ວມກັນຫຼາຍຄົນ, ໃບມອບສິດ ຕ້ອງມີລາຍເຊັນຂອງໝົດທຸກຄົນ, ເວັ້ນເສຍແຕ່ມີບຸກຄົນໃດໜຶ່ງຫາກເສຍຊີວິດ.

ອີງຕາມ ມາດຕາ 28 ຂອງຂໍ້ຕົກລົງສະບັບນີ້ ແລະ ບົດບັນຍັດອື່ນໃນໝວດນີ້, ຜູ້ຮ້ອງຂໍສາມາດແຕ່ງຕັ້ງຜູ້ຕາງໜ້າໄດ້ຫຼາຍຄົນ ຊຶ່ງມີທີ່ຢູ່ບ່ອນດຽວກັນ.

**ມາດຕາ 30 ການມອບສິດ**

ການມອບສິດ ໝາຍເຖິງ ໃບມອບສິດທີ່ເຈົ້າຂອງສິດໄດ້ມອບໝາຍໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ.

ໃບມອບສິດ ຕ້ອງກໍານົດ:

1. ລັກສະນະສະເພາະ ແລະ ຂອບເຂດຂອງການເປັນຜູ້ຕາງໜ້າ;
2. ສິດທີ່ຖືກມອບໝາຍໃນການດໍາເນີນການໃດໜຶ່ງທີ່ກ່ຽວຂ້ອງນໍາກົມຊັບສິນທາງປັນຍາ;
3. ໄລຍະເວລາ ຖ້າມີ;
4. ຜູ້ມອບສິດສາມາດຍົກເລີກໄດ້ທຸກເວລາ ໂດຍບໍ່ສົ່ງຜົນກະທົບຕໍ່ສິດຂອງຜູ້ຕາງໜ້າໃນການໄດ້ຮັບຄ່າຕອບແທນຈາກການບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນໃນລະຫວ່າງການຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຮັບຮູ້ເງື່ອນໄຂທີ່ໄດ້ກໍານົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດຫາກຂັດກັບ ກົດໝາຍ ວ່າດ້ວຍ ຊັບສິນທາງປັນຍາ ຫຼື ຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງຖືວ່າໃບມອບສິດ ນໍາໃຊ້ສະເພາະຄໍາຮ້ອງດຽວເທົ່ານັ້ນ ຖ້າໃບມອບສິດຫາກບໍ່ໄດ້ກໍານົດ ຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ ຫຼື ການດໍາເນີນການອື່ນທີ່ກ່ຽວຂ້ອງກັບໃບມອບສິດດັ່ງກ່າວ ແລະ ອາຍຸຂອງໃບມອບສິດຈະຖືວ່າສິ້ນສຸດລົງໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄໍາຮ້ອງດັ່ງກ່າວ ຫຼື ການດໍາເນີນການອື່ນຫາກສໍາເລັດແລ້ວ.

ການມອບສິດທີ່ມີຜົນບັງຄັບໃຊ້ຕ້ອງເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ມອບສິດ. ໃນກໍລະນີ ຜູ້ອອກໃບມອບສິດເປັນ ນິຕິບຸກຄົນ ຫຼື ການຈັດຕັ້ງ, ໃບມອບສິດຕ້ອງໄດ້ລົງລາຍເຊັນໂດຍຜູ້ມີສິດອໍານາດຂອງນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ.

**ມາດຕາ 31 ການສິ້ນສຸດການເປັນຜູ້ຕາງໜ້າ**

ການເປັນຜູ້ຕາງໜ້າຈະສິ້ນສຸດລົງ ໃນກໍລະນີການມອບສິດຖືກຍົກເລີກໂດຍຜູ້ມອບສິດ ຫຼື ຜູ້ຕາງໜ້າຖອນຕົວ. ໃນກໍລະນີ ຜູ້ຕາງໜ້າໄດ້ຖອນຕົວຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາ ແລະ ຜູ້ມອບອໍານາດຮັບຊາບ.

## ໝວດທີ 5
## ການທົບທວນຄືນ ແລະ ການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບ ການຈົດທະບຽນພັນພືດໃໝ່

**ມາດຕາ 32 ການທົບທວນຄືນ ແລະ ການແກ້ໄຂຂໍ້ຜິດພາດ**

ກົມຊັບສິນທາງປັນຍາ ມີສິດທົບທວນຄືນການຈົດທະບຽນພັນພືດໃໝ່ ເພື່ອດໍາເນີນການທາງດ້ານບໍລິຫານ ຕາມຄວາມຈໍາເປັນເພື່ອປ້ອງກັນ ແລະ ແກ້ໄຂຂໍ້ຜິດພາດ.

**ມາດຕາ 33 ການທົບທວນຄືນດ້ານບໍລິຫານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດສະເໜີໃຫ້ກົມຊັບສິນທາງປັນຍາ ທົບທວນຄືນການດຳເນີນການກ່ຽວກັບການຈົດທະບຽນພັນພືດໃໝ່ຂອງຕົນມີຂໍ້ຜິດພາດ ຫຼື ບໍ່ປະຕິບັດຕາມເງື່ອນໄຂ ທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້ພາຍໃນເວລາ 90 ວັນພາຍຫຼັງມື້ອອກແຈ້ງການຂອງກົມ ຕາມກໍລະນີ ດັ່ງນີ້:

1. ສະເໜີຂໍດັດແກ້ຂໍ້ຜິດພາດທີ່ເກີດຈາກກົມຊັບສິນທາງປັນຍາ ໂດຍບໍ່ຕ້ອງຈ່າຍຄ່າບໍລິການ;
2. ສະເໜີຂໍດັດແກ້ຂໍ້ຜິດພາດທີ່ເກີດຈາກຜູ້ຮ້ອງຂໍຈົດທະບຽນ ແລະ ຕ້ອງຈ່າຍຄ່າບໍລິການ;
3. ສະເໜີຂໍໃຫ້ພິຈາລະນາຄືນໃໝ່ ຊຶ່ງຕ້ອງປະກອບມີຂໍ້ມູນດັ່ງນີ້:
   3.1 ເງື່ອນໄຂ ຫຼື ການຕົກລົງ ທີ່ຕ້ອງການໃຫ້ທົບທວນຄືນ;
   3.2 ຂໍ້ເທັດຈິງ ແລະ ພື້ນຖານທາງດ້ານກົດໝາຍ;
   3.3 ມາດຕະການທີ່ສະເໜີໃຫ້ກົມຊັບສິນທາງປັນຍາພິຈາລະນາ.

ການສະເໜີຍັງອາດຈະລວມເອົາຄຳຊີ້ແຈງ ຫຼື ການອະທິບາຍຊຶ່ງຜູ້ສະເໜີເຫັນວ່າຈະເປັນການສະໜັບສະໜູນໃຫ້ແກ່ການພິຈາລະນາຄືນໃໝ່ ຫຼື ສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ໂດຍບໍ່ຈ່າຍຄ່າບໍລິການ.

**ມາດຕາ 34 ການສະເໜີໃຫ້ຢຸດຊົ່ວຄາວ**

ການສະເໜີໃຫ້ທົບທວນທາງດ້ານບໍລິຫານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 33 ຂອງຂໍ້ຕົກລົງສະບັບນີ້ ອາດລວມເຖິງ ການສະເໜີໃຫ້ຢຸດຊົ່ວຄາວ ການປະຕິບັດຜົນການພິຈາລະນາ ຂອງກົມຊັບສິນທາງປັນຍາ ທີ່ຜູ້ສະເໜີຂໍໃຫ້ພິຈາລະນາຄືນໃໝ່ ເພື່ອຄວາມຍຸຕິທຳ ໂດຍຄຳນຶງເຖິງຜົນປະໂຫຍດຂອງບຸກຄົນທີສາມ.

**ມາດຕາ 35 ການພິຈາລະນາຄືນໃໝ່**

ກົມຊັບສິນທາງປັນຍາ ຕ້ອງຮັບການສະເໜີທີ່ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຈົດທະບຽນພັນພືດໃໝ່ ຊຶ່ງຜູ້ສະເໜີຕ້ອງມີເຫດຜົນທີ່ພຽງພໍ ໃນການສະເໜີໃຫ້ທົບທວນຜົນການພິຈາລະນາທີ່ຕົນເຫັນວ່າບໍ່ສອດຄ່ອງຕາມລະບຽບການ ກ່ຽວກັບການຈົດທະບຽນພັນພືດໃໝ່.

ໃນກໍລະນີ ຜູ້ສະເໜີບໍ່ພໍໃຈຕໍ່ຜົນການພິຈາລະນາຄືນໃໝ່ສາມາດສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານເຖິງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຂອງກົມຊັບສິນທາງປັນຍາ ໃນ 30 ວັນ ນັບແຕ່ວັນອອກແຈ້ງການຂອງກົມ ກ່ຽວກັບຜົນການພິຈາລະນາດັ່ງກ່າວເປັນຕົ້ນໄປ ຖ້າຫາກບໍ່ພໍໃຈຕໍ່ຜົນການພິຈາລະນາຄືນໃໝ່.

**ມາດຕາ 36 ຂັ້ນຕອນການ ພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນການນຳກົມຊັບສິນທາງປັນຍາ ກ່ຽວກັບການຈົດທະບຽນພັນພືດໃໝ່ ມີສິດສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ເຖິງຄະນະກຳມະການພິຈາລະນາຂັ້ນສຸດທ້າຍຂອງກົມຊັບສິນທາງປັນຍາ ເພື່ອພິຈາລະນາ ຖ້າຫາກບໍ່ເຫັນດີນຳຜົນການພິຈາລະນາ ກົມຊັບສິນທາງປັນຍາ ໂດຍເສຍຄ່າທຳນຽມ ແລະ ຄ່າບໍລິການ.

ພະນັກງານວິຊາການຂອງກົມຊັບສິນທາງປັນຍາ ທີ່ມີສ່ວນຮ່ວມໃນ ການອະນຸຍາດ, ການຢັ້ງຢືນ, ການປະຕິເສດ ຫຼື ການພິຈາລະນາ ທີ່ພາໃຫ້ເກີດມີການສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ຕ້ອງໃຫ້ຄຳຊີ້ແຈງກ່ຽວກັບຫຼັກການທາງດ້ານກົດໝາຍ ແລະ ຂໍ້ເທັດຈິງກ່ຽວກັບຜົນການພິຈາລະນາດັ່ງກ່າວ ເພື່ອເປັນຂໍ້ມູນໃຫ້ແກ່ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ.

ການພິຈາລະນາຂັ້ນສຸດທ້າຍ ກົມຊັບສິນທາງປັນຍາສາມາດເຊີນຜູ້ຊ່ຽວຊານສະເພາະດ້ານມາໃຫ້ຄຳປຶກສາ. ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຂອງກົມຊັບສິນທາງປັນຍາ ຕ້ອງດຳເນີນການພິຈາລະນາ ຕາມມາດຕານີ້ ແລະ ຕ້ອງບັນທຶກການຕົກລົງເປັນລາຍລັກອັກສອນ ຂອງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ໂດຍລະບຸ ຫຼັກການທາງດ້ານກົດໝາຍ ແລະ ຂໍ້ເທັດຈິງທີ່ກ່ຽວຂ້ອງ. ບົດບັນທຶກການຕົກລົງດັ່ງກ່າວ ຕ້ອງສົ່ງໃຫ້ຜູ້ສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ເພື່ອຮັບຊາບ.

ການສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານດັ່ງກ່າວ ຖືວ່າເປັນໂມຄະໃນກໍລະນີທີ່ຜູ້ສະເໜີ ບໍ່ສາມາດສະໜອງຂໍ້ມູນທີ່ຈຳເປັນ ຕາມທີ່ກຳນົດໄວ້ໃນມາດຕາ 33 ຂໍ້ 3 ວັກ 1, ຂອງຂໍ້ຕົກລົງສະບັບນີ້.

ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຕ້ອງສົ່ງສຳນວນຄຳສະເໜີຂໍພິຈາລະນາຂັ້ນສຸດທ້າຍ ທາງດ້ານບໍລິຫານ ພ້ອມດ້ວຍບົດບັນທຶກການຕົກລົງຂອງຕົນ ໃຫ້ກົມຊັບສິນທາງປັນຍາອອກແຈ້ງການ ກ່ຽວກັບ ຜົນຂອງການຕົກລົງ ຂອງຄະນະກຳມະການພິຈາລະນາຂັ້ນສຸດທ້າຍໃຫ້ຜູ້ສະເໜີຊາບ ຊຶ່ງຖືວ່າເປັນການສິ້ນສຸດການພິຈາລະນາທາງດ້ານບໍລິຫານ.

**ມາດຕາ 37 ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ**

ກົມຊັບສິນທາງປັນຍາ ຕ້ອງສ້າງຕັ້ງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຂອງກົມຊັບສິນທາງປັນຍາ ເພື່ອດຳເນີນການພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ກ່ຽວກັບການຢັ້ງຢືນ, ການປະຕິເສດ, ການກຳນົດເງື່ອນໄຂ ຫຼື ການຕົກລົງຂອງ ກົມຊັບສິນທາງປັນຍາ.

ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຂອງກົມຊັບສິນທາງປັນຍາ ຕ້ອງເປັນເອກະລາດບໍ່ຂຶ້ນກັບພະແນກໃດພາຍໃນກົມ ຊຶ່ງສາມາດສ້າງຕັ້ງຂຶ້ນແບບຖາວອນ ຫຼື ຊົ່ວຄາວ ກໍ່ໄດ້.

ບຸກຄົນທີ່ມີສ່ວນຮ່ວມໃນ ການຢັ້ງຢືນ, ການປະຕິເສດ, ການກຳນົດເງື່ອນໄຂ ຫຼື ການຕົກລົງ ທີ່ເປັນສາເຫດຂອງການສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ບໍ່ສາມາດເຂົ້າຮ່ວມຢູ່ໃນຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຂອງກົມຊັບສິນທາງປັນຍາ.

## ໝວດທີ 6
## ການສ້າງສຳນວນເອກະສານຂຶ້ນໃໝ່

**ມາດຕາ 38 ສຳນວນເອກະສານເສຍຫາຍ ຫຼື ຊອກບໍ່ເຫັນ**

ກົມຊັບສິນທາງປັນຍາ ຕ້ອງສ້າງສຳເນົາສຳນວນເອກະສານດັ່ງກ່າວຂຶ້ນມາໃໝ່ ໃນກໍລະນີ ສຳນວນເອກະສານ ຫຼື ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການຈົດທະບຽນພັນພືດໃໝ່ ຫາກເກີດມີການເສຍຫາຍ ຫຼື ຊອກບໍ່ເຫັນ.

**ມາດຕາ 39 ການສ້າງສຳນວນເອກະສານຂຶ້ນໃໝ່**

ຖ້າສຳນວນເອກະສານ ຫຼື ເອກະສານອື່ນທີ່ພົວພັນເຖິງຄຳຮ້ອງ ຫຼື ການດຳເນີນການອື່ນ ຫາກເສຍ ຫຼື ຊອກບໍ່ເຫັນ ກົມຊັບສິນທາງປັນຍາ ຕ້ອງສ້າງສຳເນົາສຳນວນເອກະສານ ດັ່ງກ່າວ ນັ້ນຂຶ້ນໃໝ່. ກົມຊັບສິນທາງປັນຍາ ຕ້ອງແຈ້ງຜູ້ຍື່ນຄຳຮ້ອງ ຫຼື ເຈົ້າຂອງສຳນວນເອກະສານ ສົ່ງສຳເນົາເອກະສານທີ່ກ່ຽວຂ້ອງ ຫຼື ເອກະສານທີ່ໄດ້ຕິດຕໍ່ພົວພັນ ກັບກົມຊັບສິນທາງປັນຍາ ພ້ອມທັງຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງສຳເນົາດັ່ງກ່າວ ລວມທັງເອກະສານ ຫຼື ສຳນວນເອກະສານທີ່ກ່ຽວຂ້ອງ ທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ທີ່ບໍ່ມີການບັນທຶກໄວ້ ແຕ່ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ຫຼື ເຈົ້າຂອງສຳນວນເອກະສານນັ້ນຮັບຮູ້.

## ໝວດທີ 7
## ອົງການຄຸ້ມຄອງວຽກງານພັນພືດໃໝ່

**ມາດຕາ 40 ອົງການຄຸ້ມຄອງ**

ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຮັບຜິດຊອບການພິຈາລະນາຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ແລະ ອອກໃບຢັ້ງຢືນການຈົດທະບຽນພັນພືດໃໝ່ ຕາມເງື່ອນໄຂດັ່ງທີ່ກໍານົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບໃຫ້ການບໍລິການກ່ຽວກັບ ການຮັບຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ຕາມການມອບໝາຍ ຂອງກົມຊັບສິນທາງປັນຍາ.

ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ, ນະຄອນ ແມ່ນປະຕິບັດຕາມການມອບໝາຍຂອງ ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ຂໍ້ຕົກລົງ, ອອກຄໍາແນະນໍາ, ແຈ້ງການກ່ຽວກັບພັນພືດໃໝ່;
2. ຄົ້ນຄວ້າ ແລະ ນໍາສະເໜີກະຊວງ ເພື່ອອອກນິຕິກໍາ ແລະ ລະບຽບການຕ່າງໆ ໃນການຄຸ້ມຄອງ ແລະ ປົກປ້ອງພັນພືດໃໝ່;
3. ຮັບ ແລະ ພິຈາລະນາສໍານວນຄໍາຮ້ອງຂໍຈົດທະບຽນ, ການຮັກສາອາຍຸການປົກປ້ອງ, ການບັນທຶກການປ່ຽນຊື່, ທີ່ຢູ່ ແລະ ຊື່ ແລະ ທີ່ຢູ່ ການອະນຸຍາດນໍາໃຊ້, ການໂອນສິດ ແລະ ການສະເໜີອື່ນໆ ກ່ຽວກັບ ພັນພືດໃໝ່;
4. ບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບພັນພືດໃໝ່;
5. ໃຫ້ບໍລິການຄົ້ນຫາພັນພືດໃໝ່ໃນຖານຂໍ້ມູນ ຂອງກົມຊັບສິນທາງປັນຍາ;
6. ຈົດທະບຽນ, ແຈ້ງປະຕິເສດ, ຍົກເລີກ ຫຼື ລຶບລ້າງ ແລະ ອື່ນໆ ກ່ຽວກັບການຈົດທະບຽນພັນພືດໃໝ່;
7. ຄົ້ນຄວ້າ ແລະ ພິຈາລະນາຄໍາສະເໜີ ຂໍຄັດຄ້ານຄໍາຮ້ອງຂໍຈົດທະບຽນພັນພືດໃໝ່;
8. ຄົ້ນຄວ້າ ແລະ ພິຈາລະນາຄໍາສະເໜີໃຫ້ທົບທວນຄືນທາງດ້ານບໍລິຫານ ທີ່ກ່ຽວຂ້ອງກັບການຈົດທະບຽນພັນພືດໃໝ່;
9. ຄົ້ນຄວ້າ ແລະ ພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນພັນພືດໃໝ່;
10. ຊຸກຍູ້ ແລະ ສົ່ງເສີມວຽກງານພັນພືດໃໝ່;
11. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ ຂອງກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 42 ສິດ ແລະ ໜ້າທີ່ ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ**

ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຄໍາຮ້ອງ, ກວດຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງສໍານວນຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ຕາມເງື່ອນໄຂຕໍ່າສຸດ;

2. ນຳສິ່ງສຳນວນຄຳຮ້ອງ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ກົມຊັບສິນທາງປັນຍາ ເພື່ອດຳເນີນການຕາມຂັ້ນຕອນຕໍ່ໄປ;
3. ມອບໝາຍຄວາມຮັບຜິດຊອບໃຫ້ ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ ແລະ ນະຄອນ ຕາມຄວາມເໝາະສົມ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ ຂອງກົມຊັບສິນທາງປັນຍາ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 43 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ ແລະ ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 44 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ເມື່ອໄດ້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ ແລະ ຂໍ້ຕົກລົງໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**
**ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.**

ບໍ່ວຽງຄຳ ວົງດາລາ